ມີການປົກປ້ອງສຳຄັນໃນສະຖານທີ່ສຳລັບຜູ້ເຊົ່າ ໃນຂະນະທີ່ຊຸມຊົນຂອງພວກເຮົາຟື້ນຟູສະພາບຈາກຜົນກະທົບຂອງ COVID-19.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການທຳຄວາມເຂົ້າໃຈສິດທິ ແລະ ຄວາມຮັບຜິດຊອບຂອງທ່ານ ຫຼື ມີຄຳຖາມໃດໆກ່ຽວກັບບ່ອນຢູ່ອາໄສ ຫຼື ສັນຍາເຊົ່າຂອງທ່ານ, ໃຫ້ໂທຫາສາຍດ່ວນຊ່ວຍເຫຼືອ Renting in Seattle (ການເຊົ່າໃນ Seattle) ທີ່ເບີ **(206) 684-5700** ຫຼື ເຂົ້າໄປທີ່ **www.seattle.gov/rentinginseattle** ສຳລັບຂໍ້ມູນໃໝ່ຫຼ້າສຸດ.

ມີການເລື່ອນກຳນົດການຂັບໄລ່ອອກຈາກຕົວເມືອງ/ທົ່ວລັດ ເຊິ່ງໃນປັດຈຸບັນຂະຫຍາຍເວລາອອກເຖິງວັນທີ 1 ສິງຫາ 2020. ການປົກປ້ອງຫຼັກຂອງການເລື່ອນກຳນົດລວມມີ:

- ບໍ່ອະນຸຍາດໃຫ້ມີການຂັບໄລ່ ເວັ້ນເສຍຈາກວ່າມີໄພຄຸກຄາມຮ້າຍແຮງຕໍ່ສຸຂະພາບ ແລະ ຄວາມປອດໄພ, ຄວາມເສຍຫາຍຕໍ່ຊັບສິນໃຫຍ່ຫຼວງ ຫຼື ເຈົ້າຂອງຕ້ອງການຢູ່ອາໄສ ຫຼື ມີເຈດຕະນາຂາຍເຮືອນນັ້ນ.
- ບໍ່ສາມາດເພີ່ມຄ່າເຊົ່າໄດ້
- ຫ້າມບໍ່ໃຫ້ມີຄ່າທຳນຽມການຊຳລະຊ້າ

ເຈົ້າຂອງເຮືອນເຊົ່າບໍ່ສາມາດປະຕິເສດບ່ອນຢູ່ອາໄສຕໍ່ຜູ້ເຊົ່າ ຫຼື ດຳເນີນການທີ່ບໍ່ດີໄດ້, ສຳລັບປະຫວັດການຂັບໄລ່ອອກທີ່ກ່ຽວຂ້ອງກັບ COVID-19, ລະຫວ່າງວັນທີ 3 ມີນາ 2020 ແລະ 6 ເດືອນຫຼັງຈາກພາວະສຸກເສີນພົນລະເມືອງສິ້ນສຸດ.

ຄຳຮ້ອງສະໝັກຂໍເຊົ່າທັງໝົດ**ຕ້ອງ**ລະບຸຂໍ້ມູນນີ້.

ຜູ້ເຊົ່າສາມາດຂໍໃຫ້ສານຍົກເວັ້ນປະຫວັດການຂັບໄລ່ອອກທີ່ກ່ຽວຂ້ອງກັບ COVID-19 ຂອງເຂົາເຈົ້າອອກຈາກລາຍງານການກວດຄັດຜູ້ເຊົ່າໃນອະນາຄົດໄດ້.

ການບໍ່ຊຳລະຄ່າເຊົ່າອັນເນື່ອງຈາກ COVID-19 ເປັນການປ້ອງກັນທາງກົດໝາຍເປັນເວລາ 6 ເດືອນຫຼັງຈາກການເລື່ອນກຳນົດການຂັບໄລ່ອອກຈາກ Seattle ສິ້ນສຸດ.

ທ່ານ**ຕ້ອງ**ຢັ້ງຢືນຄວາມລຳບາກດ້ານການເງິນຂອງທ່ານ ເພື່ອໃຊ້ການບໍ່ຊຳລະເງິນເປັນການປ້ອງກັນການຂັບໄລ່ອອກ.

ເຈົ້າຂອງເຮືອນເຊົ່າຂອງທ່ານ**ຕ້ອງ**ຍອມຮັບແຜນການຊຳລະເງິນສຳລັບຄ່າເຊົ່າຊ້າກວ່າກຳນົດ.

- ຊຳລະຊ້າກວ່າກຳນົດ 1-2 ເດືອນ = ການຜ່ອນຊຳລະລາຍເດືອນຕິດຕໍ່ກັນ 3-5 ເດືອນ
- ຊຳລະຊ້າກວ່າກຳນົດ 2 ເດືອນຂຶ້ນໄປ = ການຜ່ອນຊຳລະລາຍເດືອນຕິດຕໍ່ກັນ 6 ເດືອນ
- ຫຼື ກຳນົດເວລາອື່ນຕາມທີ່ໄດ້ຕົກລົງເຫັນດີຮ່ວມກັນ

ແຈ້ງການ**ຊຳລະ ຫຼື ຍ້າຍອອກ *14 ມື້***ທັງໝົດຕ້ອງລວມມີພາສາສະເພາະທີ່ໃຫ້ຄຳແນະນຳຜູ້ເຊົ່າ:

- ການບໍ່ຈ່າຍຄ່າເຊົ່າເປັນການປ້ອງກັນການຂັບໄລ່ອອກ
- ຜູ້ເຊົ່າມີສິດໄດ້ຮັບແຜນການຊຳລະເງິນສຳລັບຄ່າເຊົ່າຊ້າກວ່າກຳນົດ

ບໍ່ອະນຸຍາດໃຫ້ມີຄ່າທຳນຽມ/ດອກເບ້ຍການຊຳລະຊ້າເປັນເວລາ 12 ເດືອນຫຼັງຈາກພາວະສຸກເສີນພົນລະເມືອງໃນ Seattle ສິ້ນສຸດ.

ເຈົ້າຂອງເຮືອນເຊົ່າບໍ່ສາມາດແກ້ແຄ້ນຜູ້ເຊົ່າສຳລັບການໃຊ້ສິດທິຂອງເຂົາເຈົ້າໄດ້.